# ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2020

EY
Building a better
working world

# ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ສາລະບານ


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 35 |

# ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

## ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານ ຄາເທ ຢູໄນເຕັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາທີ່ສ້າງຕັ້ງໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ຂອງ ທະນາຄານ ຄາເທ ຢູໄນເຕັດ, ທະນາຄານທີ່ໄດ້ຈົດທະບຽນໃນໄຕ້ຫວັນ. ທະນາຄານດຳເນີນກິດຈະການພາຍໃຕ້ໃບອະນຸຍາດເລກທີ 38/ທຫລ ທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 25 ພະຈິກ 2014.

ທຶນຈົດທະບຽນເລີ່ມຕົ້ນຂອງທະນາຄານແມ່ນ 100,000,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2020 ແມ່ນ 185,477,800,000 ກີບ (2019: 105,183,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງທະນາຄານແມ່ນໃຫ້ການບໍລິການທີ່ອຳນວຍຄວາມສະດວກດ້ານທຸລະກຳທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງ.

ສາຂາຕັ້ງຢູ່ບ້ານ ທັດສະດີ, ໜ່ວຍ 40, ຖະໜົນ ຊຸມບຸລົມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2020 ເຖິງວັນທີອອກເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Tsai Tu Heng | ຫົວໜ້າສາຂາ | ແຕ່ງຕັ້ງວັນທີ 26 ສິງຫາ 2019 |
| ທ່ານ Lin Ping Chi | ຮອງຫົວໜ້າສາຂາ | ແຕ່ງຕັ້ງວັນທີ 25 ພຶດສະພາ 2018 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາພາຍໃນປີ ແລະ ນະວັນທີອອກເອກະສານລາຍງານສະບັບນີ້ ແມ່ນທ່ານ Tsai Tu Heng – ຜູ້ຈັດການສາຂາ.

**ນັກກວດສອບ**

ນັກກວດສອບບັນຊີຂອງສາຂາ ແມ່ນບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງສາຂານະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020.

## ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

(1) ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ເພື່ອສະແດງພາບພົດຖືກຕ້ອງຕາມຄວາມເປັນຈິງຕໍ່ຖານະການເງິນ ແລະ ຜົນປະກອບການ ແລະ ກະແສເງິນສົດພາຍໃນປີຂອງສາຂາ. ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຕ້ອງໄດ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສອດຄ່ອງ;
- ພິຈາລະນາບັນດາລາຍການຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ເໝາະສົມໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການປະຕິບັດທີ່ບໍ່ສອດຄ່ອງທີ່ສຳຄັນຕໍ່ກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ໃນກໍລະນີທີ່ສາຂາຫາກ ຫຼື ຄາດຄະເນວ່າສາຂາບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງສາຂາ ແລະ ດ້ວຍເຫດນັ້ນ ຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນ ໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

## (2) ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນທີ່ໄດ້ຄັດຕິດນີ້ແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທະນາຄານ ແຫ່ງ ສປປ ລາວ / ທະນາຄານ ຄາເທ ຢູໄນເຕັດ ຈຳກັດ / ສາຂານະຄອນຫຼວງວຽງຈັນ / CATHAY UNITED BANK VIENTIANE CAPITAL BRANCH / ນະຄອນ ຫຼວງ ວຽງຈັນ

Mr TSAI TU HENG

ທ່ານ Tsai Tu Heng
ຫົວໜ້າສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

24 ກຸມພາ 2021

**EY**
Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61157869/22193373-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ບັນດາຜູ້ຖືຮຸ້ນ ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ**

*ຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານທາງການເງິນຂອງ ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2020, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ບັນດາບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນອີກດ້ວຍ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາແມ່ນໄດ້ກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

*ພື້ນຖານໃນການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (IASs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ພາຍໃຕ້ມາດຕະຖານສາກົນດັ່ງກ່າວແມ່ນໄດ້ ຖືກອະທິບາຍເພີ່ມເຕີມ ໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ສະບັບນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບ ຈັນຍາບັນຂອງນັກວິຊາຊີບບັນຊີຂອງ ສະພານັກບັນຊີສາກົນວ່າດ້ວຍມາດຕະຖານຂໍ້ບັງຄັບດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນຂອງ ສະພານັກບັນຊີສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່ – ຫຼັກການທາງການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີດັ່ງກ່າວແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.



A member firm of Ernst & Young Global Limited

EY
Building a better working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານຂອງສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍການການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ອາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ. ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການເປັນສ່ວນໜຶ່ງຂອງກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.



A member firm of Ernst & Young Global Limited

**EY**
Building a better
working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີກ່ຽວຂ້ອງ ວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ທ່ານ Saman Wijaya Bandara
ຮຸ້ນສ່ວນ

ທະບຽນການປະຕິບັດການກວດສອບ
ໃບຢັ້ງຢືນເລກທີ 014/ສອບກລ-APT-2019
ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021



A member firm of Ernst & Young Global Limited

ທະນາຄານ ຄາເທ ຢູໄນເຕັດ, ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລະຫັດ* | *ລາຍການ* | *ບົດອະທິບາຍ ເລກທີ* | *2020 ລ້ານກີບ* | *2019 ລ້ານກີບ* |
|---|---|---|---|---|
| A. | ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ | | | |
| 1. | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 3 | **71,475** | **51,551** |
| 2. | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 3 | **(19,700)** | **(23,029)** |
| I. | ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | | **51,775** | **28,522** |
| 3 | ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 4 | **3,805** | **1,199** |
| 4 | ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ | 4 | **(154)** | **(172)** |
| 5 | ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | 5 | **815** | **476** |
| II. | ລາຍຮັບສຸດທິຈາກການດຳເນີນງານ | | **56,241** | **30,025** |
| B | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| 6 | ລາຍຮັບອື່ນໆຈາກການດຳເນີນງານ | 6 | **697** | **215** |
| 7 | ລາຍຈ່າຍການບໍລິຫານ | | **(9,852)** | **(9,223)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 7 | (6,128) | (5,392) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (3,724) | (3,831) |
| 8 | ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 14 | **(1,068)** | **(2,087)** |
| 9 | ລາຍຈ່າຍການດຳເນີນງານອື່ນໆ | 9 | **(18)** | **(35)** |
| 10 | ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ | 13.2 | **-** | **-** |

ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລະຫັດ* | *ລາຍການ* | *ບົດອະທິບາຍ ເລກທີ* | *2020 ລ້ານກີບ* | *2019 ລ້ານກີບ* |
|---|---|---|---|---|
| III. | **ກຳໄລທັງໝົດກ່ອນຫັກອາກອນ** | | **46,000** | **18,895** |
| 11 | ລາຍຈ່າຍອາກອນກຳໄລ | 18 | **(9,043)** | **(4,505)** |
| IV. | **ກຳໄລຫຼັງຫັກອາກອນ** | | **36,957** | **14,390** |

ກະກຽມໂດຍ:

ທ່ານ ນາງ ບຸນພະພອນ ຈຸນລະມານີ
ພະນັກງານການບັນຊີ

ກວດຄືນໂດຍ:

Mr. TSAI TU HENG

ທ່ານ Tsai Tu Heng
ຫົວໜ້າສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021

ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31/12/2020 ລ້ານກີບ* | *31/12/2019 ລ້ານກີບ* |
|---|---|---|---|---|
| I | ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") | | **479,300** | **456,888** |
| 1 | ເງິນສົດໃນຄັງ | 10 | 2,568 | 1,386 |
| 2 | ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") | 11 | 476,732 | 455,502 |
| II | ໜີ້ຕ້ອງຮັບຈາກທະນາຄານອື່ນ | | **495,712** | **118,525** |
| 1 | ເງິນຝາກກະແສລາຍວັນ | 12.1 | 35,042 | 18,525 |
| 2 | ເງິນຝາກມີກຳນົດ | 12.2 | 460,670 | 100,000 |
| III | ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ | **13** | **324,590** | **443,050** |
| IV | ຊັບສິນບົດຄົງທີ່ | **14** | **3,420** | **4,488** |
| 1 | ຊັບສິນບົດຄົງທີ່ມີຕົວຕົນ | | 561 | 815 |
| 2 | ສິດນຳໃຊ້ຊັບສິນ | | 2,859 | 3,673 |
| V | ຊັບສິນອື່ນໆ | | **32,155** | **16,129** |
| 1 | ດອກເບ້ຍຄ້າງຮັບ | 15 | 28,648 | 11,986 |
| 2 | ຊັບສິນອື່ນໆ | 15 | 3,507 | 4,143 |
| | ລວມຊັບສິນ | | **1,335,177** | **1,039,080** |

ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31/12/2020 ລ້ານກີບ* | *31/12/2019 ລ້ານກີບ* |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | **1,066,510** | **886,100** |
| 1 | ເງິນກູ້ຢືມຈາກທະນາຄານອື່ນ | 16 | 1,066,510 | 886,100 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **17** | **21,384** | **18,191** |
| 1 | ເງິນຝາກປະຢັດ | | 20,271 | 17,925 |
| 2 | ເງິນຝາກໄລຍະສັ້ນ | | 1,113 | 266 |
| III | **ໜີ້ສິນອື່ນໆ** | | **10,440** | **6,944** |
| 1 | ດອກເບ້ຍຄ້າງຈ່າຍ | | 7,537 | 4,147 |
| 2 | ອາກອນເງິນເດືອນຄ້າງຊຳລະ | | 41 | 45 |
| 3 | ໜີ້ຕ້ອງສົ່ງອື່ນໆ | 19 | 2,862 | 2,752 |
| | **ລວມໜີ້ສິນ** | | **1,098,334** | **911,235** |
| IV | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 20 | 185,448 | 105,183 |
| 2 | ຄັງສະສົມຕາມລະບຽບການ | | 8,643 | 4,947 |
| 3 | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | 13.2 | 1,623 | 2,215 |
| 4 | ກຳໄລສະສົມ | | 41,129 | 15,500 |
| | **ລວມທຶນ** | | **236,843** | **127,845** |
| | **ລວມໜີ້ສິນ ແລະ ທຶນ** | | **1,335,177** | **1,039,080** |

ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *ບົດອະທິບາຍ ເລກທີ* | *31/12/2020 ລ້ານກີບ* | *31/12/2019 ລ້ານກີບ* |
|---|---|---|---|---|
| I | **ຄຳໝັ້ນສັນຍາ** | | | |
| 1 | ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້ແກ່ລູກຄ້າ | | 14,114 | 12,247 |
| | **ລວມຄຳໝັ້ນສັນຍາ** | | **14,114** | **12,247** |
| II | ຫຼັກຊັບຄໍ້າປະກັນ ແລະ ການຈຳນອງ | | | |
| A | ຫຼັກຊັບຄໍ້າປະກັນ ແລະ ການຈຳນອງສຳລັບເງິນກູ້ | | | |
| 1 | ຫຼັກຊັບຄໍ້າປະກັນ ແລະ ການຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | - | - |
| | ລວມຫຼັກຊັບຄໍ້າປະກັນ ແລະ ການຈຳນອງ | | | |

ກະກຽມໂດຍ:

ທ່ານ ນາງ ບຸນພະພອນ ຈຸນລະມານີ
ພະນັກງານການບັນຊີ

ກວດຄືນໂດຍ:

ທະນາຄານ ແຫ່ງ ສປປ ລາວ
ທະນາຄານ ຄາເທ ຢູໄນເຕັດ ຈຳກັດ
ສາຂານະຄອນຫຼວງວຽງຈັນ
CATHAY UNITED BANK
VIENTIANE CAPITAL BRANCH
ນະຄອນ ຫຼວງ ວຽງ

TSAI TU HENG

ທ່ານ Tsai Tu Heng
ຫົວໜ້າສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021

# ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ນະວັນທີ 31 ທັນວາ 2020

| ລາຍການ | ທຶນຈົດທະບຽນທີ່ໄດ້ຖອກແລ້ວ ລ້ານກີບ | ຄັງສະສົມຕາມລະບຽບການ ລ້ານກີບ | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ ລ້ານກີບ | ກຳໄລສະສົມ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2019** | **105,183** | **3,508** | **2,347** | **16,136** | **127,174** |
| ກຳໄລສຸດທິພາຍໃນປີ | - | - | - | 14,390 | 14,390 |
| ຄັງສຳຮອງຕາມລະບຽບການ | - | 1,439 | - | (1,439) | - |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (208) | - | (208) |
| ຜົດດ່ຽງຈາກອັດຕາແລກປ່ຽນ | - | - | 76 | - | 76 |
| ອາກອນທີ່ຫັກຈາກການໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (1,358) | (1,358) |
| ໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (12,229) | (12,229) |
| **ຍອດເຫຼືອນະວັນທີ 1 ມັງກອນ 2020** | **105,183** | **4,947** | **2,215** | **15,500** | **127,845** |
| ກຳໄລສຸດທິພາຍໃນປີ | - | - | - | 36,957 | 36,957 |
| ຄັງສຳຮອງຕາມລະບຽບການ | - | 3,696 | - | (3,696) | - |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (691) | - | (691) |
| ການຖອກທຶນຈົດທະບຽນ | 80,265 | - | - | - | 80,265 |
| ໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (6,869) | (6,869) |
| ອາກອນທີ່ຫັກຈາກການໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (763) | (763) |
| ຜົດດ່ຽງຈາກອັດຕາແລກປ່ຽນ | - | - | 99 | - | 99 |
| **ຍອດເຫຼືອນະວັນທີ 31 ທັນວາ 2020** | **185,448** | **8,643** | **1,623** | **41,129** | **236,843** |

ກະກຽມໂດຍ:

ທ່ານ ນາງ ບຸນພະພອນ ຈຸນລະມານີ
ພະນັກງານການບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021

ກວດຄືນໂດຍ:

ແຂວງ ທະນາຄານ ຄາເທ ຢູໄນເຕັດ ຈຳກັດ ສາຂານະຄອນຫຼວງວຽງຈັນ CATHAY UNITED BANK VIENTIANE CAPITAL BRANCH ນະຄອນ ຫຼວງ ວຽງຈັນ ສປປ ລາວ

Mr. TSAI TU HENG

ທ່ານ Tsai Tu Heng
ຫົວໜ້າສາຂາ

## ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ລ້ານກີບ* | *2019 ລ້ານກີບ* |
|---|---|---|---|
| ກິດຈະກຳການດຳເນີນງານ | | | |
| ກຳໄລສຸດທິກ່ອນອາກອນ | | **46,000** | **18,895** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | 14 | 1,068 | 2,087 |
| ເງິນແຮສຳລັບຂາດທຶນທາງສິນເຊື່ອສຸດທິ | 13.2 | (691) | (208) |
| ລາຍຮັບດອກເບ້ຍ | | (71,475) | (51,551) |
| ລາຍຈ່າຍດອກເບ້ຍ | | 19,700 | 23,029 |
| ກະແສເງິນສົດກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນຈາກການດຳເນີນງານ | | **(5,398)** | **(7,748)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (381,117) | (150,620) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 118,460 | 26,346 |
| ຊັບສິນອື່ນໆ | | (232) | 22 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆຂອງລູກຄ້າ | | 3,193 | (1,966) |
| ໜີ້ສິນອື່ນໆ | | 180,521 | 117,638 |
| ລາຍຮັບດອກເບ້ຍ | | 54,813 | 50,927 |
| ລາຍຈ່າຍດອກເບ້ຍ | | (16,311) | (31,035) |
| ອາກອນກຳໄລທີ່ຊຳລະພາຍໃນປີ | 18 | (8,077) | (5,359) |
| ກະແສເງິນສົດສຸດທິ(ໃຊ້ໃນ)/ຈາກການດຳເນີນງານ | | **(54,148)** | **(1,795)** |
| ກິດຈະກຳທາງການລົງທຶນ | | | |
| ການຊື້ຊັບສິນບົດ ແລະ ອຸປະກອນ | | (3) | (3,966) |
| ກະແສເງິນສົດສຸດທິໃຊ້ໃນການເຄື່ອນໄຫວການລົງທຶນ | | **(3)** | **(3,966)** |
| ກິດຈະກຳທາງການເງິນ | | | |
| ການຖອກທຶນຈົດທະບຽນ | | 80,265 | - |
| ໂອນກຳໄລໄປສຳນັກງານໃຫຍ່ | | (7,632) | (13,589) |
| ກະແສເງິນສົດສຸດທິໃຊ້ໃນການເຄື່ອນໄຫວທາງການເງິນ | | **72,632** | **(13,589)** |
| ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ | | **18,482** | **(19,350)** |

## ທະນາຄານ ຄາເທ ຢູໄນເຕັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ລ້ານກີບ* | *2019 ລ້ານກີບ* |
|---|---|---|---|
| ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ | | **30,438** | **49,788** |
| ເງິນສົດ ແລະ ທຽບເທົ່າເງິນສົດນະທ້າຍປີ | **21** | **48,920** | **30,438** |

ກະກຽມໂດຍ:

ທ່ານ ນາງ ບຸນພະພອນ ຈູນລະມານີ
ພະນັກງານການບັນຊີ

ກວດຄືນໂດຍ:

Mr. TSAI TU HENG
ທ່ານ Tsai Tu Heng
ຫົວໜ້າສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021

1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານ ຄາເທ ຢູໄນເຕັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາທີ່ສ້າງຕັ້ງໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ຂອງ ທະນາຄານ ຄາເທ ຢູໄນເຕັດ, ທະນາຄານທີ່ໄດ້ຈົດທະບຽນໃນໄຕ້ຫວັນ. ທະນາຄານດຳເນີນກິດຈະການພາຍໃຕ້ໃບອະນຸຍາດເລກທີ 38/ທຫລ ທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 25 ພະຈິກ 2014.

ການເຄື່ອນໄຫວຕົ້ນຕໍຂອງສາຂາແມ່ນ ເພື່ອຕອບສະໜອງການບໍລິການທາງດ້ານການເງິນ ແລະ ການທະນາຄານທີ່ກ່ຽວຂ້ອງຕໍ່ກັບເສດຖະກິດໃຫ້ດີຂຶ້ນກວ່າເກົ່າ.

*ທຶນຈົດທະບຽນ*

ທຶນຈົດທະບຽນເລີ່ມຕົ້ນຂອງທະນາຄານແມ່ນ 100,000,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2020 ແມ່ນ 185,477,800,000 ກີບ (2019: 105,183,000,000 ກີບ).

*ຄະນະບໍລິຫານ*

ສະມາຊິກຄະນະບໍລິຫານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2020 ເຖິງວັນທີອອກບົດລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Tsai Tu Heng | ຫົວໜ້າສາຂາ | ແຕ່ງຕັ້ງວັນທີ 26 ສິງຫາ 2019 |
| ທ່ານ Lin Ping Chi | ຮອງຫົວໜ້າສາຂາ | ແຕ່ງຕັ້ງວັນທີ 25 ພຶດສະພາ 2018 |

*ທີ່ຕັ້ງ*

ສາຂາຕັ້ງຢູ່ ບ້ານ ຫັດສະດີ, ໜ່ວຍ 40, ຖະໜົນ ຊຸນບູລົມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂາ ນະວັນທີ 31 ທັນວາ 2020 ແມ່ນມີ 20 ຄົນ (31 ທັນວາ 2019: 17 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

### *2.1. ຄໍາຖະແຫຼງຕາມລະບຽບການ*

ຄະນະບໍລິຫານຂອງສາຂາຂໍຖະແຫຼງວ່າ ເອກະສານລາຍງານການເງິນແມ່ນຖືກກະກຽມຖືກຕ້ອງສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

### *2.2. ພື້ນຖານໃນການກະກຽມ*

ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍ ລ້ານກີບ ("ລ້ານກີບ") ໂດຍສອດຄ່ອງກັບດໍາລັດເລກທີ 02/ນຍ ຂອງ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆທີ່ກ່ຽວຂ້ອງ ທີ່ກໍານົດໂດຍ ທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນໍາສະເໜີເອກະສານລາຍງານການເງິນ ("ລະບົບການບັນຊີລາວ").

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນໍາໃຊ້ຫຼັກການ, ຂັ້ນຕອນ ແລະ ວິທີການປະຕິບັດການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດໍາເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ແມ່ນບໍ່ໄດ້ອອກແບບມາໃຫ້ບັນດາຜູ້ທີ່ບໍ່ຮັບຮູ້ກ່ຽວກັບຫຼັກການບັນຊີຂອງ ສປປລາວ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງ ສປປ ລາວ, ແລະ ນອກນັ້ນ ເອກະສານລາຍງານການເງິນສະບັບນີ້ບໍ່ໄດ້ມີຈຸດປະສົງເພື່ອນໍາສະເໜີຖານະການເງິນຂອງທະນາຄານ, ຜົນການດໍາເນີນງານ ແລະ ກະແສເງິນສົດ ອີງຕາມຫຼັກການບັນຊີທີ່ຍອມຮັບໂດຍທົ່ວໄປຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ສາຂາມີປີການບັນຊີທີ່ສາມາດກະກຽມເອກະສານການເງິນແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.3. ການປ່ຽນແປງທາງດ້ານນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ສາຂານໍາໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສໍາລັບການລາຍງານຂອງສາຂາ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຮັບຮູ້ໃນໃບລາຍງານການດໍາເນີນງານ ກ່ຽວກັບຄ້າງຮັບຄ້າງຈ່າຍ ໂດຍນໍາໃຊ້ແບບວິທີແບບເສັ້ນຊື່ ແລະ ບັນດາອັດຕາດອກເບ້ຍແມ່ນໄດ້ລະບຸຢູ່ໃນ ສັນຍາການຝາກເງິນ/ການກູ້ຢືມເງິນ ກັບບັນດາລູກຄ້າ.

ການຮັບຮູ້ ລາຍຮັບດອກເບ້ຍຄ້າງຮັບ ແມ່ນໄດ້ລົງຄ້າງໄວ້ຊົ່ວຄາວ ເມື່ອເງິນກູ້ບໍ່ໄດ້ຖືກປະຕິບັດ (ເບິ່ງບົດອະທິບາຍເລກທີ 2.8 ສໍາລັບຄໍານິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຊື່ອວ່າ ຜູ້ກູ້ແມ່ນບໍ່ມີຄວາມສາມາດໃນການຊໍາລະດອກເບ້ຍ ແລະ ຕົ້ນທຶນ. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ແມ່ນໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນການດໍາເນີນງານເທົ່ານັ້ນເມື່ອເປັນລາຍຮັບຕົວຈິງ.

### *2.5. ການຮັບຮູ້ຄ່າທໍານຽມ ແລະ ຄ່າບໍລິການ*

ຄ່າບໍລິການ ແລະ ຄ່າທໍານຽມ ແມ່ນປະກອບດ້ວຍບັນດາຄ່າທໍານຽມທີ່ໄດ້ຮັບຈາກການໂອນເງິນທຶນ (ລວມທັງການຊໍາລະສະສາງທາງການຄ້າ), ຄ່າທໍານຽມເພີ່ມຂຶ້ນສໍາລັບບັນດາທຸລະກໍາການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທໍານຽມທີ່ເພີ່ມຈາກການຄໍ້າປະກັນທາງດ້ານການເງິນ.

ບັນດາຄ່າທໍານຽມ ແລະ ຄ່າບໍລິການ ແມ່ນໄດ້ຖືກຮັບຮູ້ລົງໃນໃບລາຍງານຜົນການດໍາເນີນງານ ທາງດ້ານພື້ນຖານເງິນສົດ.

### *2.6. ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກໍານົດຕໍ່າກວ່າ ຫຼື ເທົ່າກັບ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໃນຈໍານວນທີ່ຮູ້ໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກໍານົດຕໍ່າກວ່າ ຫຼື ເທົ່າກັບ 30 ວັນ.

### *2.7. ເງິນໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ.

### *2.8. ການຈັດຊັ້ນ ແລະ ເງິນແຮຂອງກິດຈະກໍາສິນເຊື່ອ*

*ການຈັດຊັ້ນໜີ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ (BOL 512) ລົງວັນທີ 29 ມິຖຸນາ 2018 ແລະ ຄໍາແນະນໍາຈັດຕັ້ງປະຕິບັດເລກທີ 898/ກຄທ (BOL 898) ລົງວັນທີ 14 ພະຈິກ 2018, ສາຂາ ໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆ. ເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ (“NPL”).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.8. ການຈັດຊັ້ນ ແລະ ເງິນແຮຂອງກິດຈະກຳສິນເຊື່ອ*

*ເງິນແຮ*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ (BOL 512) ແລະ BOL898, ສາຂາສ້າງຄັງແຮສຳລັບເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | | |
| A | 0.5% | ເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| B | 3.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບອື່ນ |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | | | |
| C | 20.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

a. ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫຼືອ

b. ເງິນແຮສະເພາະ = ອັດຕາເງິນແຮ x (ຍອດເງິນກູ້ທີ່ຍັງເຫຼືອ - ການຫຼຸດມູນຄ່າຂອງຫຼັກຊັບຄ້ຳປະກັນ)

*ທີ່ສາຂາສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ທຫລ.*

(ii) ຍອດເຫຼືອເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງສາຂາ.

ຍອດເຫຼືອສະສົມຂອງເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ".

(iii) ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ (ເກັບຄືນ)/ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກ".

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

***2.9. ຊັບສິນບັດຄົງທີ່***

ຊັບສິນບັດຄົງທີ່ທີ່ມີຕົວຕົນລວມມີເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ, ການປັບປຸງອາຄານ ແລະ ອື່ນໆ

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍລາຄາຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບສະຫລຸບຊັບສິນບັດ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

***2.10. ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່***

ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ແມ່ນ ຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ ການຄາດຄະເນອາຍຸການນຳໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍ ສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2020 ອອກໂດຍປະທານສະພາແຫ່ງຊາດ, ອັດຕາການຄິດໄລ່ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| ອາຄານ ແລະ ການປັບປຸງ | 5% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຄື່ອງເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ | 20% |
| ພາຫະນະ | 20% |

***2.11. ການເຊົ່າ***

*2.11.1. ສິດໃນການນຳໃຊ້ຊັບສິນ*

ໃນມື້ເລີ່ມຕົ້ນຂອງສັນຍາ, ສາຂາຈະປະເມີນວ່າສັນຍາວ່າສັນຍາເປັນ, ຫຼື ປະກອບດ້ວຍອົງປະກອບຂອງການເຊົ່າບໍ່ນັ້ນ ແມ່ນອີງຕາມການພິຈະລະນາສັນຍາທີ່ບົ່ງບອກເຖິງການເປັນຜູ້ນຳໃຊ້ (ຜູ້ເຊົ່າ) ສິດໃນການຄວບຄຸມການນຳໃຊ້ຊັບສິນ ທີ່ລະບຸໃນຊ່ວງໄລຍະເວລາໃດໜຶ່ງໃນການແລກປ່ຽນ. ຫາກສັນຍາມີອົງປະກອບການເຊົ່າຫຼາຍກວ່າໜຶ່ງອົງປະກອບ ຫຼື ປະສົມປະສານທຸລະກຳການຊື້ ແລະ ການບໍລິການ ຈະຖືກພິຈາລະນາໃຫ້ແບ່ງອອກເປັນສ່ວນຕາມແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນອົງປະກອບຂອງສັນຍາເຊົ່າໂດຍສະຫຼຸບ ແລະ ຕີລາຄາຂອງສັນຍາຄືນໃໝ່ທຸກຄັ້ງຕາມພື້ນຖານລາຄາຊື້ຂາຍສິນຄ້າລາຍການດຽວ. ສາຂາປະສົມປະສານສ່ວນປະກອບຂອງສັນຍາເຊົ່າ ແລະ ອົງປະກອບທີ່ບໍ່ແມ່ນສັນຍາເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນສັນຍາຄ່າເຊົ່າໄດ້.

## 2.11. *ການເຊົ່າ (ຕໍ່)*

### 2.11.1. *ສິດໃນການນຳໃຊ້ຊັບສິນ (ຕໍ່)*

ສາຂາຮັບຮູ້ສິດໃນການນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນຳໃຊ້ໄດ້). ສິດນຳໃຊ້ຊັບສິນແມ່ນຖືກວັດແທກຕາມຕົ້ນທຶນ, ລົບໃຫ້ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ແລະ ດັດປັບການວັດແທກຄືນໜີ້ຕ້ອງສົ່ງສັນຍາເຊົ່າ. ຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນລວມມີ ມູນຄ່າໜີ້ຕ້ອງສົ່ງສັນຍາເຊົ່າດັດແກ້ສຳລັບ ການຊຳລະສະສາງທີ່ເກີດຂຶ້ນນະມື້ ຫຼື ກ່ອນວັນທີເລີ່ມຕົ້ນຂອງການເຊົ່າ, ບວກບັນດາລາຍຈ່າຍຕົ້ນທຶນທາງກົງທີ່ເກີດຂຶ້ນ ແລະ ລາຍຈ່າຍຄາດຄະເນທີ່ຈະຮື້ຖອນ ແລະ ເຄື່ອນຍ້າຍຊັບສິນອື່ນໆພາຍໃຕ້ສັນຍາເຊົ່າ ຫຼື ການຕິດຕັ້ງຄືນບັນດາຊັບສິນ ຫຼື ສະຖານທີ່ທີ່ຕັ້ງຢູ່ນັ້ນ, ລົບສິ່ງຈູງໃຈການເຊົ່າທີ່ໄດ້ຮັບ. ໄລຍະເວລາການເຊົ່າ ລວມເຖິງທາງເລືອກຂອງໄລຍະການຕໍ່ສັນຍາຖ້າມີຄວາມແນ່ນອນທີ່ສົມເຫດສົມຜົນໃນການທີ່ຈະປະຕິບັດທາງເລືອກນັ້ນ. ນອກຈາກວ່າ ສາຂາລວບລວມສິດຄວາມເປັນເຈົ້າຂອງທີ່ແນ່ນອນຂອງຊັບສິນຈາກສັນຍາເຊົ່າໄດ້ຢ່າງສົມເຫດສົມຜົນໃນມື້ສິ້ນສຸດໄລຍະເວລາເຊົ່າ, ການຮັບຮູ້ສິດນຳໃຊ້ຊັບສິນ ແມ່ນຈະຫັກຄ່າຫຼຸ້ຍຫ້ຽນແບບເສັ້ນຊື່ຕາມອາຍຸການໃຊ້ງານ ແລະ ອາຍຸສັນຍາຄ່າເຊົ່າ. ສິດນຳໃຊ້ຊັບສິນແມ່ນຈະຕ້ອງໄດ້ຮັບການປະເມີນຄ່າເສື່ອມມູນຄ່າ.

### 2.11.2. *ໜີ້ສິນການເຊົ່າ*

ໃນວັນທີເລີ່ມຕົ້ນຂອງການເຊົ່າ, ສາຂາໄດ້ຮັບຮູ້ໜີ້ສິນການເຊົ່າທີ່ຖືກວັດແທກໃນມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າ ທີ່ຕ້ອງຈ່າຍຕະຫຼອດໄລຍະສັນຍາເຊົ່າ. ການຈ່າຍຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ລົບແຮງຈູງໃຈຂອງການເຊົ່າທີ່ໄດ້ຮັບ), ການຈ່າຍຄ່າເຊົ່າທີ່ປ່ຽນແປງອີງຕາມດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າ ຍັງລວມມີລາຄາທີ່ໃຊ້ໃນທາງເລືອກໃນການຊື້ທີ່ແນ່ນອນຢ່າງສົມເຫດສົມຜົນວ່າ ຈະປະຕິບັດໂດຍສາຂາ ແລະ ການຈ່າຍຄ່າປັບໃໝສຳລັບການຢຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນການໃຊ້ທາງເລືອກໃນການຢຸດຕິ. ການຈ່າຍຄ່າເຊົ່າທີ່ປ່ຽນແປງໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນກຳລະນີທີ່ເຫດການ ຫຼື ສະພາບການທີ່ກໍ່ໃຫ້ເກີດການຈ່າຍເງິນເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ, ສາຂານຳໃຊ້ອັດຕາສ່ວນເພີ່ມຂອງການກູ້ຢືມນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຖ້າອັດຕາດອກເບ້ຍສ່ວນຫຼຸດສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນຂອງສັນຍາເຊົ່າ, ມູນຄ່າໜີ້ຕ້ອງສົ່ງການເຊົ່າແມ່ນເພີ່ມຂຶ້ນເພື່ອສະທ້ອນເຖິງດອກເບ້ຍ ແລະ ສ່ວນລົດລົງຈາກໄດ້ຮັບການຊຳລະສັນຍາເຊົ່າ. ນອກຈາກນີ້, ມູນຄ່າຕາມບັນຊີຂອງໜີ້ຕ້ອງສົ່ງການເຊົ່າ ແມ່ນໄດ້ຮັບການວັດແທກຄືນໃໝ່ຖ້າມີການປ່ຽນແປງໃດໜຶ່ງ ເຊັ່ນການປ່ຽນແປງຂອງໄລຍະເວລາການເຊົ່າ, ການປ່ຽນແປງໃນເນື້ອໃນເງື່ອນໄຂການຊຳລະ ຫຼື ປ່ຽນແປງໃນການປະເມີນເພື່ອຊື້ບັນດາຊັບສິນດັ່ງກ່າວ.

### 2.11.3. *ການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນມູນຄ່າຕ່ຳ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນ ທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າຈາກວັນທີເລີ່ມຕົ້ນຂອງການເຊົ່າ ແລະ ບໍ່ລະບຸທາງເລືອກໃນການຊື້. ພ້ອມທັງນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າຊັບສິນມູນຄ່າຕ່ຳຂອງຊັບສິນທີ່ພິຈາລະນາວ່າມີມູນຄ່າຕ່ຳ. ການຊຳລະຄ່າເຊົ່າຂອງສັນຍາເຊົ່າໄລຍະສັ້ນ ແລະ ຊັບສິນທີ່ມີມູນຄ່າຕ່ຳ ແມ່ນຮັບຮູ້ເປັນລາຍຈ່າຍແບບເສັ້ນຊື່ຕະຫຼອດໄລຍະສັນຍາເຊົ່າ.

### 2.11.4. *ການດັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່*

ສາຂາກຳນົດໄລຍະເວລາການເຊົ່າລະບຸໄລຍະເວລາທີ່ບໍ່ສາມາດຍົກເລີກຂອງການເຊົ່າ, ລວມທັງໄລຍະເວລາຂອງທາງເລືອກໃນການຕໍ່ສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະເລືອກທາງນີ້ ຫຼື ໄລຍະເວລາຂອງທາງເລືອກໃນການຢຸດຕິສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະເລືອກທາງນີ້.

## *2.11. ການເຊົ່າ (ຕໍ່)*

### *2.11.4. ການຕັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່ (ຕໍ່)*

ສາຂານຳໃຊ້ການຕັດສິນໃຈໃນການປະເມີນວ່າຈະດຳເນີນການຕໍ່ສັນຍາຄືນໃໝ່ທີ່ແນ່ນອນ. ການຕັດສິນໃຈແມ່ນພິຈາລະນາປັດໄຈທີ່ກ່ຽວຂ້ອງທັງໝົດທີ່ກໍ່ໃຫ້ເກີດການຈູງໃຈທາງເສດຖະກິດສຳລັບການດຳເນີນການຕໍ່ສັນຍາຄືນໃໝ່. ຫຼັງຈາກວັນທີເລີ່ມຕົ້ນ ສາຂາປະເມີນຄືນໃໝ່ໜີ້ຕ້ອງສົ່ງການເຊົ່າ ຖ້າມີເຫດການທີ່ສຳຄັນພາຍໃນການຄວບຄຸມ ແລະ ກະທົບຕໍ່ຄວາມສາມາດທີ່ຈະດຳເນີນ (ຫຼື ບໍ່ດຳເນີນ) ການຕໍ່ສັນຍາຄືນໃໝ່ (ຕົວຢ່າງ ການປ່ຽນແປງທາງຍຸດທະສາດຂອງທຸລະກິດ). ສາຂາລວມມີໄລຍະເວລາການຕໍ່ສັນຍາຄືນໃໝ່ ເປັນສ່ວນໜຶ່ງຂອງໄລຍະເວລາການເຊົ່າທີ່ສຳຄັນຂອງຊັບສິນເຫຼົ່ານີ້ໃນການດຳເນີນງານ.

ການກຳນົດວ່າອີງປະກອນແມ່ນການເຊົ່າ ຫຼື ບໍ່, ຫຼື ປະກອບມີການເຊົ່າ ແມ່ນອີງຕາມເນື້ອໃນຂອງອີງປະກອບ ແລະ ຈຳຕ້ອງມີການປະເມີນວ່າມີອີງປະກອບຄົບຖ້ວນ ຫຼື ບໍ່ນັ້ນ ແມ່ນອີງຕາມການນຳໃຊ້ສະເພາະຂອງຊັບສິນ ຫຼື ຊັບສິນ ແລະ ອີງປະກອບທີ່ເປັນສິດນຳໃຊ້ຊັບສິນ.

*ສາຂາໃນຖານະຜູ້ເຊົ່າ*

ການເຊົ່າ, ທີ່ທຸກຄວາມສ່ຽງ ແລະ ຜົນປະໂຫຍດຂອງຄວາມເປັນເຈົ້າຂອງລາຍການການເຊົ່າ ບໍ່ຖືກໂອນໄປຍັງສາຂາແມ່ນການເຊົ່າໃນການດຳເນີນງານ. ການຊຳລະການເຊົ່າໃນການດຳເນີນງານ ແມ່ນຮັບຮູ້ເປັນລາຍຈ່າຍໃນ ກຳໄລ ຫຼື ຂາດທຶນ ຕາມແບບເສັ້ນຊື່ຕະຫຼອດອາຍຸຂອງສັນຍາເຊົ່າ. ໜີ້ຕ້ອງສົ່ງຄ່າເຊົ່າແມ່ນຮັບຮູ້ເປັນລາຍຈ່າຍໃນຊ່ວງໄລຍະທີ່ລາຍການເກີດຂຶ້ນ.

## *2.12. ຄັງສະສົມ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດ ຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການດັ່ງລຸ່ມນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມກົດລະບຽບຕາມ ມາດຕາ 156, ກົດໝາຍທຸລະກິດ ລົງວັນທີ 26 ທັນວາ 2013, ທະນາຄານແມ່ນໄດ້ຖືກຮຽກຮ້ອງໃຫ້ແບ່ງປັນຜົນກຳໄລ 10% ຫຼັງຈາກເສຍອາກອນແຕ່ລະປີເຂົ້າໃນຄັງສຳຮອງຕາມລະບຽບການ. ເມື່ອຄັງດັ່ງກ່າວນີ້ເຖິງ 50% ຂອງທຶນຈົດທະບຽນ, ທາງທະນາຄານອາດຈະຢຸດຫັກເງິນແຮກໍໄດ້, ເວັ້ນເສຍແຕ່ໄດ້ ກຳນົດໄວ້ໃນລະບຽບກົດໝາຍ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນ ຈະໄດ້ຮັບການສ້າງຕັ້ງຂຶ້ນຕາມການຕັດສິນໃຈຂອງຄະນະບໍລິຫານ. ອີງຕາມສາຂາໄດ້ກຳນົດຄັງເງິນແຮສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ດັ່ງນີ້:

| *ຄັງສະສົມ* | *% ຫຼັງຈາກຫັກອາກອນກຳໄລ (ລົບ ຂາດທຶນສະສົມ, ຖ້າມີ)* |
|---|---|
| ຄັງສະສົມຕາມລະບຽບການ | 10 |
| ຄັງຂະຫຍາຍທຸລະກິດ | - |

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.13. ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດປີທີ່ສິ້ນສຸດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2020 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ນະມື້ໃບລາຍງານຖານະການເງິນແມ່ນຖືກບັນທຶກເຂົ້າໃນ *"ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດສຸດທິ"* ໃນໃບລາຍງານຜົນການດຳເນີນງານ.

| | *31 ທັນວາ 2020* | *31 ທັນວາ 2019* |
|---|---|---|
| | *ກີບ* | *ກີບ* |
| ໂດລາ ສະຫະລັດ | 8,861 | 8,556 |
| ບາດ ໄທ | 298 | 264 |
| ເອີໂຣ | 11,475 | 9,957 |

### *2.14. ອາກອນ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ຕາມຄວາມເຫມາະສົມ, ສາຂານອນໃນອັດຕາອາກອນຂອງ 20% ສຳລັບປີທີ່ສິ້ນສຸດ 31 ທັນວາ 2020 (2019: 24%). ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.15. ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຂອງພະນັກງານຫຼັງອອກການຈະຖືກຈ່າຍໃຫ້ພະນັກງານຂອງສາຂາຜູ້ທີ່ກິນເບ້ຍບຳນານໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນຄ່າປະກັນສັງຄົມໃຫ້ກັບຕົວແທນປະກັນສັງຄົມໃນຈຳນວນທຽບເທົ່າ 6% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດຂອງພະນັກງານນອກເໜືອຈາກນີ້.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງເລກທີ 43/ສພຊ ອະນຸມັດໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 28 ມັງກອນປີ 2014, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຕາມເງື່ອນໄຂດັ່ງລຸ່ມນີ້:

- ໃນກໍລະນີເມື່ອພະນັກງານຂາດທັກສະຄວາມຊຳນານ ຫຼື ບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້.
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເລີກຈ້າງເທື່ອດຽວໃຫ້ພະນັກງານ ເຊິ່ງການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງສຳລັບຜູ້ທີ່ເຮັດວຽກຕ່ຳກວ່າ 3 ປີ. ສຳລັບຜູ້ທີ່ເຮັດວຽກເກີນ 3 ປີ ພື້ນຖານຄິດໄລ່ແມ່ນ 15%. ນະວັນທີ 31 ທັນວາ 2020, ສາຂາບໍ່ມີພະນັກງານທີ່ຕົກຢູ່ພາຍໃຕ້ກໍລະນີທີ່ໄດ້ກ່າວມາຂ້າງເທິງ; ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ສ້າງລັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | 2020<br>*ລ້ານກີບ* | 2019<br>*ລ້ານກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກ:** | | |
| ທຸລະກໍາລະຫວ່າງທະນາຄານ | 49,850 | 23,562 |
| ເງິນກູ້ໃຫ້ລູກຄ້າ | 21,625 | 27,989 |
| *ເງິນກູ້ໃຫ້ກະຊວງກະຊວງການເງິນ* | *21,625* | *27,175* |
| *ເງິນກູ້ໃຫ້ລູກຄ້າອື່ນໆ* | *-* | *814* |
| | **71,475** | **51,551** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນສໍາລັບ:** | | |
| ທຸລະກໍາລະຫວ່າງທະນາຄານ | (19,626) | (22,940) |
| *ເງິນກູ້ຈາກທະນາຄານ ຄາເທ ຢູໄນເຕັດ ໄຕ້ຫວັນ* | *(19,626)* | *(22,940)* |
| ເງິນຝາກຂອງລູກຄ້າ | (74) | (89) |
| | **(19,700)** | **(23,029)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **(51,775)** | **28,522** |

## 4. ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ

| | 2020<br>*ລ້ານກີບ* | 2019<br>*ລ້ານກີບ* |
|---|---|---|
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ກິດຈະກໍາແລກປ່ຽນທາງດ້ານການເງິນ | 3,805 | 1,199 |
| | **3,805** | **1,199** |
| **ລາຍຈ່າຍຄ່າຄ່າທໍານຽມ ແລະ ບໍລິການ** | **(154)** | **(172)** |
| **ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ** | **3,651** | **1,027** |

## 5. ກໍາໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ

| | 2020<br>*ລ້ານກີບ* | 2019<br>*ລ້ານກີບ* |
|---|---|---|
| ກໍາໄລຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | 1,273 | 683 |
| ຂາດທຶນຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | (458) | (207) |
| | **815** | **476** |

## 6. ລາຍຮັບອື່ນໆຈາກການດຳເນີນງານ

| | *2020* | *2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ການເກັບຄືນຂອງເງິນແຮທົ່ວໄປ *(ບົດອະທິບາຍເລກທີ 13.2)* | 691 | 208 |
| ລາຍຮັບອື່ນໆ | 6 | 7 |
| | **697** | **215** |

## 7. ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | *2020* | *2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຄ່າແຮງງານ ແລະ ເງິນເດືອນ | 4,229 | 3,668 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 1,899 | 1,724 |
| | **6,128** | **5,392** |

## 8. ລາຍຈ່າຍບໍລິຫານອື່ນໆ

| | *2020* | *2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ພາສີ ແລະ ອາກອນ | 478 | 385 |
| ຄ່າເຊົ່າ | 1,180 | 1,467 |
| ອຸປະກອນ | 117 | 14 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 101 | 103 |
| ຄ່ານ້ຳມັນ | 29 | 31 |
| ຄ່າເຄື່ອງໃຊ້ຫ້ອງການ | 19 | 21 |
| ຄ່າໃຊ້ຈ່າຍການເດີນທາງທຸລະກິດ | 19 | 165 |
| ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 2 | 248 |
| ຄ່າໂທລະຄົມມະນາຄົມ | 616 | 536 |
| ລາຍຈ່າຍບໍລິການຄຸ້ມຄອງ | 516 | 306 |
| ລາຍຈ່າຍຄ່າກວດສອບ | 202 | 189 |
| ອື່ນໆ | 445 | 366 |
| | **3,724** | **3,831** |

## 9. ລາຍຈ່າຍການດຳເນີນງານອື່ນໆ

| | 2020<br>ລ້ານກີບ | 2019<br>ລ້ານກີບ |
|---|---|---|
| ຄ່າໃຊ້ຈ່າຍໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 18 | 35 |
| | **18** | **35** |

## 10. ເງິນສົດໃນຄັງ

| | 31/12/2020<br>ລ້ານກີບ | 31/12/2019<br>ລ້ານກີບ |
|---|---|---|
| ເງິນສົດໃນຄັງເປັນເງິນກີບ | 329 | 141 |
| ເງິນສົດໃນຄັງເປັນເງິນຕາຕ່າງປະເທດ | 2,239 | 1,245 |
| | **2,568** | **1,386** |

## 11. ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”)

| | 31/12/2020<br>ລ້ານກີບ | 31/12/2019<br>ລ້ານກີບ |
|---|---|---|
| ເງິນຝາກກະແສລາຍວັນ | 11,310 | 10,527 |
| ເງິນຝາກປະຈຳ (*) | 463,700 | 443,050 |
| ຄັງສຳຮອງຕາມລະບຽບການ (**) | 1,717 | 1,920 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ (***) | 5 | 5 |
| | **476,732** | **455,502** |

(*) ເງິນຝາກປະຈຳຢູ່ທະນາຄານແຫ່ງ ສປປ ລາວ ແມ່ນຝາກເປັນເງິນໂດລາສະຫະລັດ, ກຳນົດຝາກ 12 ເດືອນ ແລະ ອັດຕາດອກເບ້ຍ 6.00 - 6.37% ຕໍ່ປີ.

(**) ພາຍໃຕ້ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານ ແຫ່ງ ສປປ ລາວໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 4% ສຳລັບເງິນກີບ ແລະ 8% ສຳລັບ ສະກຸນເງິນອື່ນ (2019: 5% ແລະ 10%) 2 ເດືອນຕໍ່ຄັ້ງ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກ່ວາ 12 ເດືອນ. ພາຍໃນປີ, ສາຂາຮັກສາເງິນຝາກພາກບັງຄັບໄດ້ສອດຄ່ອງຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

(***) ອີງຕາມດຳລັດເລກທີ 02/ນຍ ຂອງທະນາຄານແຫ່ງ ສປປ ລາວ, ສາຂາຂອງທະນາຄານຕ່າງປະເທດໄດ້ຖືກຮຽກຮ້ອງໃຫ້ຮັກສາຍອດເຫຼືອຕ່ຳສຸດຂອງເງິນຝາກຄ້ຳປະກັນທຶນຈົດທະບຽນກັບທະນາຄານແຫ່ງ ສປປ ລາວ ເຊິ່ງເທົ່າກັບ 25% ຂອງທຶນຈົດທະບຽນຖອກແລ້ວເພື່ອຮັກສາຄວາມຕໍ່ເນື່ອງໃນການດຳເນີນງານ. ສາຂາໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕາມໜັງສືແຈ້ງການສະບັບເລກທີ 30/ກຄທ ລົງວັນທີ 23 ມັງກອນ 2015 ແລະ ໜັງສືແຈ້ງການສະບັບເລກທີ 64/ກຄທ ລົງວັນທີ 24 ກຸມພາ 2015 ໃນການຖອນເງິນຈາກບັນຊີເງິນຝາກດັ່ງກ່າວເພື່ອສະໜັບສະໜູນທຶນໃນການດຳເນີນງານ.

## 12. ໜີ້ຕ້ອງຮັບຈາກທະນາຄານອື່ນ

### *12.1. ເງິນຝາກກະແສລາຍວັນ*

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ | | |
| ຄາເທ ຢູໄນເຕັດ ໄຕ້ຫວັນ, ໄທເປ | 35,042 | 18,525 |
| | **35,042** | **18,525** |

### *12.2. ເງິນຝາກມີກໍານົດ*

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນຝາກມີກໍານົດຢູ່ທະນາຄານພາຍໃນປະເທດ | | |
| ເງິນຝາກມີກໍານົດຢູ່ທະນາຄານພາຍໃນປະເທດ | 460,670 | 100,000 |
| | **460,670** | **100,000** |

## 13. ເງິນກູ້ປ່ອຍໃຫ້ແກ່ລູກຄ້າ, ຫັກເງິນແຮສຸດທິສໍາລັບເງິນກູ້ບໍ່ເກີດດອກອອກຜົນ

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ໃຫ້ແກ່ລູກຄ້າ *(ບົດອະທິບາຍເລກທີ 13.1)* | 324,590 | 443,050 |
| *ເງິນກູ້ໃຫ້ກະຊວງການເງິນ* | 324,590 | 443,050 |
| *ຫັກເງິນແຮສະເພາະ* | - | - |
| | **324,590** | **443,050** |

| | *2020* | *2019* |
|---|---|---|
| | *ອັດຕາດອກເບ້ຍ % ຕໍ່ປີ* | *ອັດຕາດອກເບ້ຍ % ຕໍ່ປີ* |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 5.85 | 5.66 |

## 13. ເງິນກູ້ປ່ອຍໃຫ້ແກ່ລູກຄ້າ, ຫັກເງິນແຮສຸດທິສໍາລັບເງິນກູ້ບໍ່ເກີດດອກອອກຜົນ (ຕໍ່)

### *13.1. ການວິເຄາະຂອງເງິນກູ້ໃຫ້ລູກຄ້າ*

*ການວິເຄາະຕາມສະກຸນເງິນ*

| | *31/12/2020* *ລ້ານກີບ* | *31/12/2019* *ລ້ານກີບ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 324,590 | 443,050 |
| | **324,590** | **443,050** |

*ການວິເຄາະຕາມສະຖານະເງິນກູ້*

| | *31/12/2020* *ລ້ານກີບ* | *31/12/2019* *ລ້ານກີບ* |
|---|---|---|
| ເງິນກູ້ເກີດດອກອອກຜົນ | 324,590 | 443,050 |
| | **324,590** | **443,050** |

*ວິເຄາະຕາມເງື່ອນໄຂກໍານົດ*

| | *31/12/2020* *ລ້ານກີບ* | *31/12/2019* *ລ້ານກີບ* |
|---|---|---|
| ເງິນກູ້ໄລຍະກາງ | 324,590 | 443,050 |
| | **324,590** | **443,050** |

## 13. ເງິນກູ້ປ່ອຍໃຫ້ແກ່ລູກຄ້າ, ເງິນແຮສຸດທິສຳລັບເງິນກູ້ບໍ່ເກີດດອກອອກຜົນ (ຕໍ່)

### *13.2. ເງິນແຮສຳລັບໜີ້ເສຍ*

ການເຄື່ອນໄຫວຂອງເງິນແຮສຳລັບໜີ້ເສຍຂອງສາຂາ ມີດັ່ງນີ້:

| *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ* | *2020*<br>*ລ້ານກີບ* | *2019*<br>*ລ້ານກີບ* |
|---|---|---|
| ຍອດເຫຼືອນະວັນທີ 1 ມັງກອນ | **2,215** | **2,347** |
| ເກັບຄືນເງິນແຮພາຍໃນປີ | (691) | (208) |
| ຜົນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດພາຍໃນປີ | 99 | 76 |
| ຍອດເຫຼືອນະວັນທີ 31 ທັນວາ | **1,623** | **2,215** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫຼືອເງິນກູ້*<br>*ລ້ານກີບ* | *ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ*<br>*ລ້ານກີບ* | *ເງິນແຮທັງໝົດ*<br>*ລ້ານກີບ* |
|---|---|---|---|
| ໜີ້ປົກກະຕິ | 324,590 | 1,623 | 1,623 |
| ລວມ | **324,590** | **1,623** | **1,623** |

## 14. ຊັບສິນບັດຄົງທີ່

### *14.1. ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ເຄື່ອງໃຊ້ຫ້ອງການ ລ້ານກີບ* | *ເຄື່ອງເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ ລ້ານກີບ* | *ຕຶກອາຄານ ແລະ ການປັບປຸງ ລ້ານກີບ* | *ອື່ນໆ ລ້ານກີບ* | *ສິດນຳໃຊ້ຊັບສິນ* | | | *ລວມທັງໝົດ ລ້ານກີບ* |
|---|---|---|---|---|---|---|---|---|
| | | | | | *ຕຶກອາຄານ ລ້ານກີບ* | *ພາຫະນະ ລ້ານກີບ* | *ສິດນຳໃຊ້ຊັບສິນ ລ້ານກີບ* | |
| ຕົ້ນທຶນ: | | | | | | | | |
| ນະວັນທີ 31 ທັນວາ 2019 | 4,516 | 305 | 1,474 | 3,340 | 2,339 | 1,554 | 3,893 | 13,528 |
| ນະວັນທີ 31 ທັນວາ 2020 | 4,516 | 305 | 1,474 | 3,340 | 2,339 | 1,554 | 3,893 | 13,528 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | | | | | |
| ນະວັນທີ 31 ທັນວາ 2019 | 3,733 | 304 | 1,474 | 3,309 | 195 | 25 | 220 | 9,040 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ 2020 | 235 | 1 | - | 18 | 479 | 335 | 814 | 1,068 |
| ນະວັນທີ 31 ທັນວາ 2020 | 3,968 | 305 | 1,474 | 3,327 | 674 | 360 | 1,034 | 10,108 |
| ມູນຄ່າສຸດທິ: | | | | | | | | |
| ນະວັນທີ 31 ທັນວາ 2019 | 783 | 1 | - | 31 | 2,144 | 1,529 | 3,673 | 4,488 |
| ນະວັນທີ 31 ທັນວາ 2020 | 548 | - | - | 13 | 1,665 | 1,194 | 2,859 | 3,420 |

ຂໍ້ມູນດ້ານລຸ່ມນີ້ແມ່ນມູນຄ່າຍັງເຫຼືອຂອງໜີ້ສິນການເຊົ່າ (ເຊິ່ງກໍໄດ້ລະບຸຢູ່ພາຍໃຕ້ຫົວຂໍ້ "ໜີ້ຕ້ອງສົ່ງອື່ນໆ" ໃນບົດອະທິບາຍເລກທີ 19) ແລະ ການເຄື່ອນໄຫວພາຍໃນປີ:

| | *31/12/2020 ລ້ານກີບ* |
|---|---|
| ນະວັນທີ 31 ທັນວາ 2019 | |
| ດອກເບ້ຍຄ້າງຊຳລະ | **1,529** |
| ການຊຳລະ | 23 |
| ສ່ວນຜິດດ່ຽງຈາກເງິນຕາຕ່າງປະເທດ | (348) |
| | 122 |
| ນະວັນທີ 31 ທັນວາ 2020 | **1,326** |

## 14. ຊັບສິນບັດຄົງທີ່ (ຕໍ່)

### *14.2. ຊັບສິນບັດຄົງທີ່ມີຕົວຕົນ* (ຕໍ່)

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

| | | | | | *ສິດນໍາໃຊ້ຊັບສິນ* | | | |
|---|---|---|---|---|---|---|---|---|
| | *ເຄື່ອງໃຊ້ຫ້ອງການ ລ້ານກີບ* | *ເຄື່ອງເຟີນິເຈີ້ ແລະ ເຄື່ອງຕິດຕັ້ງ ລ້ານກີບ* | *ຕຶກອາຄານ ແລະ ການປັບປຸງ ລ້ານກີບ* | *ອື່ນໆ ລ້ານກີບ* | *ຕຶກອາຄານ ລ້ານກີບ* | *ພາຫະນະ ລ້ານກີບ* | *ສິດນໍາໃຊ້ຊັບສິນ ລ້ານກີບ* | *ລວມທັງໝົດ ລ້ານກີບ* |
| ຕົ້ນທຶນ: | | | | | | | | |
| ນະວັນທີ 31 ທັນວາ 2018 | 4,443 | 305 | 1,474 | 3,340 | - | - | - | 9,562 |
| ຊື້ເພີ່ມໃນປີ 2019 | 73 | - | - | - | 2,339 | 1,554 | 3,893 | 3,966 |
| ນະວັນທີ 31 ທັນວາ 2019 | 4,516 | 305 | 1,474 | 3,340 | 2,339 | 1,554 | 3,893 | 13,528 |
| ຄ່າຫຼຸ້ຍຫ້ຽນສະສົມ: | | | | | | | | |
| ນະວັນທີ 31 ທັນວາ 2018 | 2,840 | 244 | 1,186 | 2,683 | - | - | - | 6,953 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ 2019 | 893 | 60 | 288 | 626 | 195 | 25 | 220 | 2,087 |
| ນະວັນທີ 31 ທັນວາ 2019 | 3,733 | 304 | 1,474 | 3,309 | 195 | 25 | 220 | 9,040 |
| ມູນຄ່າສຸດທິ: | | | | | | | | |
| ນະວັນທີ 31 ທັນວາ 2018 | 1,603 | 61 | 288 | 657 | - | - | - | 2,609 |
| ນະວັນທີ 31 ທັນວາ 2019 | 783 | 1 | - | 31 | 2,144 | 1,529 | 3,673 | 4,488 |

## 15. ຊັບສິນອື່ນໆ

| | *31/12/2020 ລ້ານກີບ* | *31/12/2019 ລ້ານກີບ* |
|---|---|---|
| ດອກເບ້ຍຄ້າງຮັບ | 28,648 | 11,986 |
| *ດອກເບ້ຍຄ້າງຮັບສໍາລັບການຝາກຢູ່ ທຫລ* | *9,358* | *9,435* |
| *ດອກເບ້ຍຄ້າງຮັບສໍາລັບການຝາກຢູ່ທະນາຄານອື່ນ* | *19,185* | *2,412* |
| *ດອກເບ້ຍຄ້າງຮັບສໍາລັບການກູ້ຢືມໃຫ້ແກ່ກະຊວງການເງິນ* | *105* | *139* |
| ຊັບສິນອື່ນໆ | 3,507 | 4,143 |
| *ລາຍຈ່າຍລ່ວງໜ້າ* | *337* | *175* |
| *ອາກອນກໍາໄລຈ່າຍລ່ວງໜ້າ (ບົດອະທິບາຍເລກທີ 18)* | *1,700* | *2,666* |
| *ຊັບສິນອື່ນໆ* | *1,470* | *1,302* |
| | **32,155** | **16,129** |

## 16. ເງິນກູ້ຢືມຈາກທະນາຄານອື່ນ

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ທະນາຄານ ຄາເທ ຢູໄນເຕັດ ໄຕ້ຫວັນ, ໄທເປ | 1,066,510 | 886,100 |
| | **1,066,510** | **886,100** |

ລາຍລະອຽດຂອງເງິນກູ້ຢືມ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| *ສະກຸນເງິນ* | *ໄລຍະ* | *ຍອດເຫຼືອສະກຸນ ເງິນເດີມ* | *ທຽບເທົ່າ ລ້ານກີບ* | *ອັດຕາດອກເບ້ຍຕໍ່ປີ %* |
|---|---|---|---|---|
| ໂດລາ | 12 ເດືອນ | 30,000,000 | 278,220 | 2.13 |
| ໂດລາ | 12 ເດືອນ | 30,000,000 | 278,220 | 1.01 |
| ໂດລາ | 12 ເດືອນ | 35,000,000 | 324,590 | 0.62 |
| ໂດລາ | 12 ເດືອນ | 20,000,000 | 185,480 | 0.56 |
| | | **115,000,000** | **1,066,510** | |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ລາຍລະອຽດຂອງໜີ້ຕ້ອງສົ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນຝາກປະຢັດ | | |
| ເງິນຝາກປະຢັດເປັນເງິນກີບ | 202 | 70 |
| ເງິນຝາກປະຢັດເປັນສະກຸນເງິນຕ່າງປະເທດ | 20,069 | 17,855 |
| | **20,271** | **17,925** |
| ເງິນຝາກມີກໍານົດ | | |
| ເງິນຝາກໄລຍະສັ້ນເປັນສະກຸນເງິນຕ່າງປະເທດ | 1,113 | 266 |
| | **1,113** | **266** |
| | **21,384** | **18,191** |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍຂອງເງິນຝາກເຫຼົ່ານີ້ ມີດັ່ງລຸ່ມນີ້:

| | *2020* |
|---|---|
| | *%* |
| | *ອັດຕາດອກເບ້ຍຕໍ່ປີ* |
| ເງິນຝາກປະຢັດເປັນເງິນກີບ | 1.89 |
| ເງິນຝາກປະຢັດເປັນເງິນໂດລາ | 1.00 - 1.20 |
| ເງິນຝາກປະຢັດເງິນບາດ | 0.08 - 0.50 |
| ເງິນຝາກມີກໍານົດໄລຍະສັ້ນເປັນເງິນໂດລາ | 1.30 - 2.70 |

## 18. ອາກອນ

*ອາກອນກໍາໄລ*

ສາຂາມີພັນທະໃນການຈ່າຍອາກອນກໍາໄລໃນອັດຕາ 20% ຂອງກໍາໄລທັງໝົດກ່ອນຫັກອາກອນພາຍໃນປີ ຕາມກົດໝາຍສ່ວຍສາອາກອນເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນ ວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2020.

| | *2020* | *2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ກໍາໄລກ່ອນຫັກອາກອນ | 46,000 | 18,895 |
| *ລົບ: ລາຍຮັບທີ່ຖືກຍົກເວັ້ນອາກອນ* | *(815)* | (208) |
| *ບວກ: ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ* | *30* | 85 |
| **ລາຍຮັບທີ່ຕ້ອງເສຍອາກອນ** | **45,215** | **18,772** |
| **ລາຍຈ່າຍອາກອນກໍາໄລຂອງທຸລະກິດ, ໃນອັດຕາຕາມກົດໝາຍ 20%** | **9,043** | **4,505** |
| ອາກອນກໍາໄລທີ່ຈ່າຍລ່ວງໜ້າໃນຕົ້ນປີ | (2,666) | (1,812) |
| ອາກອນກໍາໄລທີ່ໄດ້ຈ່າຍພາຍໃນປີ | (8,077) | (5,359) |
| **ອາກອນກໍາໄລທີ່ຈ່າຍລ່ວງໜ້ານະທ້າຍປີ** | **(1,700)** | **(2,666)** |

ການແຈ້ງເສຍອາກອນຂອງສາຂາຕ້ອງໄດ້ຮັບການໄລ່ລຽງຄືນໂດຍເຈົ້າໜ້າທີ່ເພາະວ່າການນໍາໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈໍານວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຄັ້ງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 19. ໜີ້ຕ້ອງສົ່ງອື່ນໆ

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຮັບລໍຖ້າຊໍາລະສະສາງ | 137 | 120 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 1,142 | 856 |
| ໜີ້ຕ້ອງສົ່ງໃຫ້ສິນເຊື່ອພາຍນອກ | 257 | 247 |
| ໜີ້ສິນການເຊົ່າ | 1,326 | 1,529 |
| | **2,862** | **2,752** |

## 20. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວພາຍໃນປີ ມີດັ່ງລຸ່ມນີ້:

| | *2020* | *2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຍອດຍົກມາ | 105,183 | 105,183 |
| ການເພີ່ມທຶນພາຍໃນປີ | 80,265 | - |
| **ຍອດເຫຼືອທ້າຍປີ** | **185,448** | **105,183** |

## 21. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2020* | *31/12/2019* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນຄັງ | 2,568 | 1,386 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 11,310 | 10,527 |
| ເງິນຝາກກະແສລາຍວັນຢູ່ບັນດາທະນາຄານອື່ນ | 35,042 | 18,525 |
| | **48,920** | **30,438** |

## 22. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບສາຂາ ຈະຖືວ່າມີສ່ວນກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ, ໄດ້ຮັບການຄວບຄຸມໂດຍ, ຫຼື ພາຍໃຕ້ການຄວບຄຸມ ໂດຍສາຂາ (ໃນນີ້ລວມມີ ທະນາຄານສໍານັກງານໃຫຍ່, ສາຂາ ແລະ ສະມາຊິກຂອງສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມ ສາຂາ

(ຂ) ພາກສ່ວນດັ່ງກ່າວແມ່ນຜູ້ຮ່ວມທຶນ ເຊິ່ງສາຂາໄດ້ຮ່ວມທຶນນໍາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງ ຜູ້ບໍລິຫານຫຼັກຂອງ ສາຂາ ຫຼື ທະນາຄານສໍານັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນ ໃຫຍ່ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ສາຂາທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ ຫຼື ກິດຈະການອື່ນໆທີ່ມີສາຍພົວພັນກັບ ສາຂາ.

ລາຍການເຄື່ອນໄຫວທີ່ສໍາຄັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2020 ມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *31 ທັນວາ 2020 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2019 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານ ຄາເທ ຢູໄນເຕັດ ໄຕ້ຫວັນ, ໄທເປ | ທະນາຄານສໍານັກງານໃຫຍ່ | ເງິນຝາກກະແສລາຍວັນຢູ່ທະນາຄານສໍານັກງານໃຫຍ່ | 35,042 | 18,525 |
| | | ເງິນກູ້ຢືມຈາກທະນາຄານສໍານັກງານໃຫຍ່ | (1,066,510) | 886,100 |

## 22. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສໍາຄັນກັບ ພາກສ່ວນທີ່ກ່ຽວຂ້ອງ ພາຍໃນປີ 2020 ມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ ພາຍໃນປີ* | *ຮັບ/(ຈ່າຍ) ລ້ານກີບ* | *ລາຍຮັບ/(ລາຍຈ່າຍ) ລ້ານກີບ* |
|---|---|---|---|---|
| ທະນາຄານ ຄາເທ ຢູໄນ ເຕັດ ໄຕ້ຫວັນ,ໄທເປ | ທະນາຄານສໍານັກງານ ໃຫຍ່ | ເງິນຝາກ | (16,517) | 6,525 |
| | | ຮັບຈາກເງິນກູ້ຢືມ | 180,410 | (116,016) |

***ລາຍການເຄື່ອນໄຫວທີ່ສໍາຄັນກັບຄະນະບໍລິຫານຂອງສາຂາ***

ຜົນຕອບແທນໃຫ້ສະມາຊິກຂອງສະພາບໍລິຫານມີດັ່ງນີ້:

| | *2020 ລ້ານກີບ* | *2019 ລ້ານກີບ* |
|---|---|---|
| ເງິນເດືອນ | 796 | 810 |
| | **796** | **810** |

## 23. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ

ບໍ່ມີບັນຫາ ຫຼື ສະຖານະການທີ່ເກີດຂຶ້ນຕັ້ງແຕ່ວັນທີຂອງການລາຍງານ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ ນາງ ບຸນພະພອນ ຈຸນລະມານີ
ພະນັກງານການບັນຊີ

ກວດຄືນໂດຍ:

TSAI TU HENG

ທ່ານ Tsai Tu Heng
ຫົວໜ້າສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
24 ກຸມພາ 2021

EY | Assurance | Tax | Transactions | Advisory

## About EY

EY is a global leader in assurance, tax, transaction and advisory services. The insights and quality services we deliver help build trust and confidence in the capital markets and in economies the world over. We develop outstanding leaders who team to deliver on our promises to all of our stakeholders. In so doing, we play a critical role in building a better working world for our people, for our clients and for our communities.

EY refers to the global organization, and may refer to one or more, of the member firms of Ernst & Young Global Limited, each of which is a separate legal entity. Ernst & Young Global Limited, a UK company limited by guarantee, does not provide services to clients. For more information about our organization, please visit ey.com.

© 2019 Ernst & Young Lao Co., Limited.
All Rights Reserved.

SCORE No.
ED MMYY

This material has been prepared for general informational purposes only and is not intended to be relied upon as accounting, tax or other professional advice. Please refer to your advisors for specific advice.

ey.com